# ຄວາມຮູ້ພູມປັນຍາທ້ອງຖິ່ນ

# ການລ້ຽງໄກ່

(ສະບັດທົດລອງ)



ຂຽນໂດຍ: ອ.ຈ ສົມພູ

ຂໍ້ມູນຈາກ: ບ້ານ ປາກມີ້ ເມືອງ ຊະນະຄາມ ແຂວງວຽງຈັນ

ປີ 2006

PDF created with pdfFactory Pro trial version www.pdffactory.com

PDF created with pdfFactory Pro trial version www.pdffactory.com

# ປື້ມຄວາມຮູ້ພູມປັນຍາທ້ອງຖິ່ນ

# ການລ້ຽງໄກ່

ຮີບໂຮມ ແລະຈັດພິມໜ້າໂດຍ: ລຳເງິນ ສຸວັນນະບັນດິດ

ຜູ້ຮຽບຮຽງ: ອ.ຈ. ໂພໄຊ ຈັນທະວົງສາ

ອ.ຈ. ລັ່ງ ແສງດາລາ

ເຈົ້າຂອງ: ຫ້ອງການສຶກສາເມືອງຊະນະຄາມ ແຂວງວຽງຈັນ

ຈັນ ແລະສູນອົບຮົມຮ່ວມພັດທະນາ

Pestalozzi Children's Foundation
A world for Children

PDF created with pdfFactory Pro trial version www.pdffactory.com

# ຄຳນຳ

ປື້ມພູມປັນຍາທ້ອງຖິ່ນຫົວນີ້ໄດ້ມາຈາກການຂຽນຂອງຊາວບ້ານ ແລະອາສາສະໝັກຊຶ່ງໄດ້ຮຽບຮຽງໃນເບື້ອງຕົ້ນຈາກຄະນະອຳນວຍການສູນອົບຮົມຮ່ວມພັດທະນາ ແລະສຶກສາເມືອງຊະນະຄາມ.

ປື້ມຫົວນ້ອຍຫົວນີ້ໄດ້ບັນຈຸເອົາເນື້ອໃນທີ່ເວົ້າເຖິງຫົວຂໍ້ໃດນຶ່ງໂດຍມີຫຼາຍກິດຈະກຳທີ່ຈະເປັນການທົດລອງເອົາຄວາມຮູ້ທ້ອງຖິ່ນເຂົ້ານຳພາ ແລະສິດສອນນັກຮຽນຊັ້ນປະຖົມໂດຍເອົາບົດທີ່ງ່າຍສອນຊັ້ນ ປໍ 1 ປໍ 2 ແລະບົດທີ່ຍາກກໍເອົາສອນຊັ້ນໃຫຍ່ຂຶ້ນໄປ.

ຄະນະຈັດທຳຄິດວ່າປື້ມຫົວນີ້ຄົງເປັນບ່ອນອີງອັນໜຶ່ງໃຫ້ແກ່ຄູອາຈານກໍຄືອາສາສະໝັກທີ່ຈະໄປສອນເດັກປະຖົມບໍ່ຫຼາບກໍໜ້ອຍ.

ຄະນະຈັດທຳຄິດວ່າຍັງມີຫຼາຍເນື້ອໃນທີ່ຍັງບໍ່ທັນພຽງພໍ ແລະຂາດໄປຫວັງວ່າຈະໄດ້ຮັບການຕິຊົມຈາກທຸກທ່ານພວກເຮົາພ້ອມທີ່ຈະປັບປຸງນຕາມຄວາມເໝາະສົມ.

ຄະນະຈັດທຳ

PDF created with pdfFactory Pro trial version www.pdffactory.com

**ສາລະໜ້າຮູ້**

ໃຫ້ເຂົ້າໃຈວ່າການລ້ຽງໄກ່ເປັນອາຊີບດີອັນໜຶ່ງຖ້າເຮົາເອົາໃຈໃສ່ຄິດ ຢາກສ້າງເສດຖະກິດການລ້ຽງໄກ່ນີ້ກໍຫາກດີເພາະມັນສາມາດທັງແກ້ ໄຂການກິນຢູ່ຂອງຄອບຄົວອີກແຕ່ວ່າຕ້ອງເປັນຄົນທີ່ຂະຫຍັນໝັ່ນພຽນ ແລະ ຕ້ອງສູ້ຊົນຕໍ່ວຽກງານ.



PDF created with pdfFactory Pro trial version www.pdffactory.com

## ກາບ: ການລ້ຽງໄກ່

ການລ້ຽງໄກ່ ໄກ່ນ້ອຍໄກ່ໃຫຍ່
ເບາະອອກໃໝ່ ເກືອຫົວອາຫານ
ເປັນຫຼັກການ ວິທີລ້ຽງໄກ່
ມັນຈະໃຫຍ່ ອ້ວນພີດີງາມ
ໃຫ້ເຮັດຕາມ ຫຼັກສູດເພິ່ນວ່າ
ລ້ຽງຢູ່ປ່າ ຕາມໄຮ່ຕາມສວນ
ຫຼາຍສົມຄວນ ໃນການລ້ຽງໄກ່
ລ້ຽງໃຫ້ໃຫຍ່ ເດີພວກລູກຫຼານ.

## ເຊີ້ງ: ການລ້ຽງໄກ່

ເອົາມາເຮົາມາ
ເຮົາມາສຶກສາ ໃນການລ້ຽງໄກ່
ໃຫ້ເອົາໃຈໃສ່ ສ້າງເສດຖະກິດ
ຢ່າໄດ້ຫຼົງຜິດ ຄິດວ່າມັນຍາກ
ມັນບໍ່ລຳບາກ ບໍ່ຍາກບໍ່ຊາ
ເຮົາພັດທະນາ ໃນການລ້ຽງໄກ່
ໃຫ້ເອົາໃຈໃສ່ ລ້ຽງໃຫ້ມັນດີ
ລ້ຽງໃຫ້ມັນພີ ໃຫ້ໂຕໃຫຍ່ໆ
ໃຫ້ໄດ້ຂາຍໄຂ່ ພ້ອມໂຕມັນນຳ

PDF created with pdfFactory Pro trial version www.pdffactory.com

# ເພງ: **ການລ້ຽງໄກ່**

ການລ້ຽງໄກ່ ມັນບໍ່ຍາກດອກໜາ
ມີຕຳລາ ຫລັກສູດການລ້ຽງໄກ່
ເອົາໄກ່ແມ່ມາ ຫາໄກ່ຜູ້ໂຕໃຫຍ່ (ຊ້ຳ)
ມາລ້ຽງໃສ່ ກັບແມ່ພັນດີໆ
ລ້ຽງໄກ່ແຈ້ ຫຼືວ່າລ້ຽງໄກ່ຕີ
ເລືອກພັນດີໆ ຕາມໃຈຕ້ອງການ
ຂໍແນະນຳ ຢ່າລືມຫົວອາຫານ (ຊ້ຳ)
ໃຫ້ພວກລູກພວກຫຼານ ຈົດຈຳໄວ້ຢ່າລືມ

# ລຳ: **ການລ້ຽງໄກ່**

ການລ້ຽງໄກ່ ມັນມີຕຳລາ
ຟັງເອົາສາ ວິທີລ້ຽງໄກ່
ລ້ຽງໂຕນ້ອຍ ຫຼືວ່າໂຕໃຫຍ່
ເອົາໃຈໃສ່ ລ້ຽງໃຫ້ມັນດີ
ລ້ຽງໃຫ້ພີ ຢ່າໃຫ້ມັນຈ່ອຍ
ຢ່າລ້ຽງໜ້ອຍ ໃຫ້ລ້ຽງຫຼາຍໆ
ໃຫ້ໄດ້ຂາຍ ມີເງິນເປັນລ້ານ
ຢ່າສູ່ຄ້ານ ເຫັນແກ່ການນອນ
ເປັນບົດສອນ ວິທີລ້ຽງໄກ່ ເທົ່ານີ້ແລ້ວ

PDF created with pdfFactory Pro trial version www.pdffactory.com

## ຮູບແລະປະຫວັດຂອງຜູ້ຂຽນ



ຊື່: ສົມພູ

ນາມສະກຸນ: ແສນໃຈວຸດ

ອາຍຸ: 60 ປີ

ອານຊີບ: ຮອງນາຍບ້ານ

## ເຫດຜົນຂອງການຫົວຂໍ້ນີ້ບົດນີ້

ເພາະວ່າມັນເປັນອາຊີບເສີມໃຫ້ແກ່ເຮົາໄດ້ຖ້າເຮົາລ້ຽງຈຳນວນຫຼາຍເຮົາກໍສາມາດເອົາໄປຂາຍໄດ້ ແລະ ຍັງສາມາດເປັນອາຊີບເສີມ ອີກດ້ວຍ. ດັ່ງນັ້ນຈຶ່ງຍາກໃຫ້ຊາວໜຸ່ມເຍົາວະຊົນໄດ້ຮຽນຮູ້ ແລະ ວິທີ ການລ້ຽງໄກ່ເປັນຢ່າງດີ.

PDF created with pdfFactory Pro trial version www.pdffactory.com

PDF created with pdfFactory Pro trial version www.pdffactory.com